**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 54 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 23-03-2006

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ

## ນະໂຍບາຍແຫ່ງຊາດ ວ່າດ້ວຍການປະເມີນຜົນກະທົບຕໍ່ສຸຂະພາບ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2006.

- ອີງຕາມມະຕິຕົກລົງ ຂອງກອງປະຊຸມລັດຖະບານ ສະບັບເລກທີ 01/ນຍ, ລົງວັນທີ 19 ມັງກອນ 2006.

- ອີງຕາມເອກະສານສະເໜີ ຂອງກະຊວງ ສາທາລະນະສຸກ ສະບັບເລກທີ 436/ກຊສ, ລົງວັນທີ 6 ມີນາ 2006.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

ມາດຕາ1 : ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍການປະເມີນຜົນກະທົບຕໍ່ສຸຂະພາບຢ່າງເປັນທາງການ ຕາມທີ່ລັດຖະມົນຕີວ່າການ ກະຊວງສາທາລະນະສຸກໄດ້ລົງລາຍເຊັນ ເລີ່ມແຕ່ ວັນທີ 1 ມີນາ 2006 ໃນຂອບເຂດທົ່ວປະເທດ.

ມາດຕາ2 : ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການສົມທົບກັບ ບັນດາກະຊວງ ແລະ ບັນດາອົງການທີ່ກ່ຽວຂ້ອງ ດຳເນີນການເຜີຍແພ່ແນະນຳ ແລະ ສ້າງນິຕິກຳໃນແຕ່ລະດ້ານ ເພື່ອຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

ມາດຕາ3 : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ4 : ໃຫ້ລຶບລ້າງບັນດາຂໍ້ກໍານົດ ແລະ ລະບຽບການຕ່າງໆ ທີ່ຂັດກັບເນື້ອໃນຂອງນະໂຍບາຍແຫ່ງຊາດ ວ່າດ້ວຍການປະເມີນຜົນກະທົບຕໍ່ສຸຂະພາບ.

ມາດຕາ5 : ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ